ຈັດຕັ້ງປະຕິບັດໂດຍ

# ໂຄງການອາຊີວະສຶກສາ ໃນ ສປປ ລາວ

**ໂຄງການ VELA ສະໜັບສະໜູນ ສປປ ລາວ ໃນການຈັດຕັ້ງປະຕິບັດ ຮູບແບບ ອາຊີວະສຶກສາແບບຄວບຄູ່ ເພື່ອພັດທະນາກຳລັງແຮງງານທີ່ມີທັກສະ ທີ່ສອດຄ່ອງ ແລະ ຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.**

## ຄວາມເປັນມາ

ເສດຖະກິດຂອງ ສປປ ລາວ ມີການເຕີບໂຕມາເປັນເວລາຫຼາຍປີແຕ່ການແຜ່ລະບາດຂອງພະຍາດໂຄວິດ -19 ເຮັດໃຫ້ສະພາບເສດຖະກິດໄດ້ຮັບຜົນກະທົບ ແລະ ສິນຄ້າມີລາຄາສູງຂຶ້ນ. ການແຜ່ລະບາດດັ່ງກ່າວ ໄດ້ເຮັດໃຫ້ການສຶກສາ ແລະ ການຝຶກອົບຮົມບໍ່ສາມາດດໍາເນີນໄປໄດ້ເປັນເວລາ 2 ປີ. ອັດຕາເງິນເຟີ້ທີ່ສູງ ແລະ ການຂາດກຳລັງແຮງງານທີ່ມີທັກສະ ແມ່ນອຸປະສັກຕົ້ນຕໍ ຕໍ່ກັບການຟື້ນຟູ ແລະ ພັດທະນາດ້ານເສດຖະກິດ, ໂດຍສະເພາະຢູ່ໃນບັນດາແຂວງ ທີ່ມີທ່າແຮງດ້ານເສດຖະກິດ. ເນື່ອງຈາກຄວາມກົດດັນທາງເສດຖະກິດ ເຮັດໃຫ້ການເຂົ້າຮຽນ ຫຼຸດລົງຫຼາຍໃນທຸກລະດັບ ໂດຍສະເພາະ ການຫຼຸດລົງຢ່າງຫຼວງຫຼາຍ ຂອງຈໍານວນນັກຮຽນຍິງທີ່ຕ້ອງການເຂົ້າຮຽນສາຂາທີ່ເຂົາເຈົ້າມັກ.

ປັດຈຸບັນ ລະບົບອາຊີວະສຶກສາໃນ ສປປ ລາວ ຍັງພົບກັບຄວາມຫຍຸ້ງຍາກໃນການສະໜອງກຳລັງແຮງທີ່ສອດຄ່ອງກັບຄວາມຕ້ອງການຂອງຫົວໜ່ວຍທຸລະກິດ. ນັກສຶກສາທີ່ຮຽນຈົບທີ່ມີທັກສະ ແມ່ນບໍ່ພຽງພໍຕໍ່ຄວາມຕ້ອງການ. ສິ່ງດັ່ງກ່າວນີ້ເຮັດໃຫ້ການພັດທະນາເສດຖະກິດຂອງປະເທດມີຄວາມທ້າທາຍ, ໂດຍສະເພາະໃນບັນດາເຂດສູນກາງທີ່ມີທ່າແຮງດ້ານເສດຖະກິດ. ກະຊວງສຶກສາທິການ ແລະ ກິລາໄດ້ສົ່ງເສີມອາຊີວະສຶກສາແບບຄວບຄູ່ (ອສຄ) ເຊິ່ງເປັນຮູບແບບການຮຽນວິຊາຊີບ ທີ່ພາກລັດ ແລະ ບັນດາຫົວໜ່ວຍທຸລະກິດ ມີຄວາມຮັບຜິດຊອບຮ່ວມກັນ ໃນການພັດທະນາແຮງງານທີ່ມີທັກສະ ເພື່ອສ້າງກຳລັງແຮງງານທີ່ຕອບສະໜອງຄວາມຕ້ອງການ ຂອງຕະຫຼາດແຮງງານໄດ້.

## ຈຸດປະສົງ

ສາຂາທີ່ຈັດຕັ້ງປະຕິບັດການຮຽນ - ການສອນ ອາຊີວະສຶກສາແບບຄວບຄູ່ (ອສຄ) ທີ່ແທດເໝາະໄດ້ຖືກຈັດຕັ້ງປະຕິບັດທົ່ວປະເທດໃນ ສປປ ລາວ



*ຄູຝຶກຢູ່ສະຖານປະກອບການ ນໍາພານັກສຶກສາຮຽນປະຕິບັດຕົວຈິງ ຢູ່ໂຮງແຮມ ສາຂາ ການບໍລິການໂຮງແຮມແບບມືອາຊີບ ຮູບພາບໂດຍ: © ທ່ານ ພູນຊັບ ເທບວົງສາ*

| | |
|---|---|
| ຊື່ໂຄງການ | ໂຄງການອາຊີວະສຶກສາ ໃນ ສປປ ລາວ |
| ໃຫ້ທຶນໂດຍ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນເຢຍລະມັນ |
| ເຂດເປົ້າໝາຍຂອງໂຄງການ | ໃນ ສປປ ລາວ ທົ່ວປະເທດ |
| ຄູ່ຮ່ວມງານໂຄງການ | ກະຊວງສຶກສາທິການ ແລະ ກິລາ (ສສກ), ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ສຄອຊ) |
| ໄລຍະເວລາ | ສິງຫາ 2024 - ກໍລະກົດ 2027 |

## ວິທີດໍາເນີນງານ

ໂຄງການສະໜັບສະໜູນ ຄູ່ຮ່ວມງານທີ່ສໍາຄັນ ກໍ່ຄື ກົມອາຊີວະສຶກສາ (ອສ) ຂອງກະຊວງສຶກສາທິການ ແລະ ກິລາ (ສສກ) ແລະ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ (ສຄອຊ) ດ້ວຍການສືບຕໍ່ພັດທະນາ ແລະ ສ້າງຄວາມເຂັ້ມແຂງ ເງື່ອນໄຂໂຄງປະກອບທາງດ້ານນິຕິກໍາ ສໍາລັບການຈັດຕັ້ງປະຕິບັດວຽກງານ ອສຄ ໃນ ສປປ ລາວ ເຊິ່ງລວມມີກິດຈະກໍາດັ່ງນີ້:

**ການຮ່ວມມືໃນລະດັບຫົວຫນ່ວຍທຸລະກິດ:**

**<u>ຄວາມຍືນຍົງ</u>:** ສະຫນັບສະຫນູນໃນການພັດທະນາຍຸດທະສາດເພື່ອຄວາມຍືນຍົງດ້ານການເງິນ ແລະ ເພື່ອສົ່ງເສີມສູນບໍລິການອາຊີວະສຶກສາແບບຄວບຄູ່ (ອສຄ) ຂອງ ສຄອຊ.

**<u>ຄໍາແນະນໍາດ້ານວິຊາການ</u>:** ໃຫ້ຄໍາແນະນໍາ ແລະ ຝຶກອົບຮົມແກ່ຜູ້ມີສ່ວນຮ່ວມກິດຈະກໍາ ທັງພາກລັດ ແລະ ຫົວຫນ່ວຍທຸລະກິດ ເພື່ອຈັດຕັ້ງປະຕິບັດວຽກງານ ອສຄ ໃນທົ່ວປະເທດລາວ ຢ່າງມີປະສິດທິພາບ.

**ການຮ່ວມມືໃນລະດັບພາກລັດ:**

**<u>ການເຂົ້າເຖິງອາຊີວະສຶກສາ ແລະ ຕະຫລາດແຮງງານຂອງໄວຫນຸ່ມ</u>:** ເພີ່ມການເຂົ້າເຖິງຂໍ້ມູນ ແລະ ການບໍລິການໃຫ້ຄໍາປຶກສາດ້ານອາຊີບ ສໍາລັບນັກຮຽນທຸກຄົນ, ລວມທັງກຸ່ມຜູ້ທີ່ດ້ອຍໂອກາດ ທີ່ຢູ່ໃນ ແລະ ນອກ ສະຖາບັນອາຊີວະສຶກສາ .

**<u>ທັກສະທາງສັງຄົມ</u>:** ໃຫ້ຄໍາແນະນໍາ ແກ່ສະຖານອາຊີວະສຶກສາ ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດແຕ່ລະສາຂາວິຊາ ທີ່ກວມເອົາການສົ່ງເສີມ ຊີວິດ ແລະ ທັກສະທາງສັງຄົມຂອງນັກສຶກສາ .

**<u>ການເປັນຜູ້ປະກອບການ</u>:** ຈັດຕັ້ງປະຕິບັດ ຊຸດການຝຶກອົບຮົມທີ່ສົ່ງເສີມການເປັນ

ຜູ້ປະກອບການ ຫຼື ການເຮັດທຸລະກິດສ່ວນຕົວ ໃນສະຖານອາຊີວະສຶກສາ.

**ການຮ່ວມມືໃນລະດັບສະຖານອາຊີວະສຶກສາ ແລະ ສະຖານປະກອບການຄູ່ຮ່ວມງານ:**

- **<u>ເຄືອຂ່າຍການຮຽນຮູ້ລະດັບສະຖານອາຊີວະສຶກສາ</u>:** ສະໜັບສະໜູນສະຖານອາຊີວະສຶກສາ ໃນການສ້າງເຄືອຄ່າຍເພື່ອແບ່ງປັນຄວາມຮູ້ ວິທີການ ແລະ ປະສົບການ ໃນການຈັດຕັ້ງປະຕິບັດ ອສຄ.
- **<u>ອາຊີວະສຶກສາສີຂຽວ ແລະ ດິຈິຕອລ</u>:** ສະໜັບສະໜູນສະຖານອາຊີວະສຶກສາໃນການປັບປຸງການຝຶກອົບຮົມຄູ ເພື່ອໃຫ້ກວມເອົາອາຊີວະສຶກສາສີຂຽວ ແລະ ດິຈິຕອລ ແລະ ນຳໃຊ້ວິທີການສອນແບບມີສ່ວນຮ່ວມ.
- **<u>ບົດບາດຍິງ-ຊາຍ</u>:** ກວມເອົາ ແລະ ສຸມໃສ່ ສາຂາວິຊາທີ່ໜ້າສົນໃຈສຳລັບນັກຮຽນຍິງ. ແນະນຳການຄຸ້ມຄອງຄຸນນະພາບ ສາຂາວິຊາ ທີ່ຈັດຕັ້ງປະຕິບັດ ການຮຽນ-ການສອນ ອສຄ ຢູ່ສະຖານອາຊີວະສຶກສາ ແລະ ສະຖານປະກອບການ

## ສິ່ງທີ່ພວກເຮົາບັນລຸ

ພາຍຫຼັງ ໂຄງການ VELA ໄລຍະ II ໄດ້ສິ້ນສຸດ, ມີສະຖານປະກອບການ ຫຼາຍກວ່າ 150 ແຫ່ງ ເຂົ້າຮ່ວມການຈັດຕັ້ງປະຕິບັດ ອສຄ. ຄູຝຶກຂອງສະຖະປະກອບການເຂົ້າໃຈກ່ຽວກັບບົດບາດການຝຶກອົບຮົມຂອງພວກເຂົາຢ່າງເປັນມືອາຊີບ. ການມອບລາງວັນແຫ່ງຊາດ ສຳລັບສະຖານປະກອບການ ແລະ ສະຖານອາຊີວະສຶກສາ ທີ່ຫ້າວຫັນໃນການຈັດຕັ້ງປະຕິບັດ ອສຄ ແມ່ນຈະຖືກຈັດຂຶ້ນ ເປັນຄັ້ງທີ່ສາມ ໃນປີ 2024. ກະຊວງສຶກສາທິການ ແລະ ກິລາ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໄດ້ເລີ່ມຮັບຮອງ ບັນດາຄູຝຶກ, ການຝຶກອົບຮົມພາກປະຕິບັດ ຢູ່ສະຖານປະກອບການ ແລະ ສະຖານປະກອບການຄູ່ຮ່ວມງານແຕ່ລະແຫ່ງ. ຊ່ອງທາງການແນະນຳດ້ານອາຊີບ (OASA) ໄດ້ຖືກນຳສະເໜີໃຫ້ແກ່ນັກຮຽນ ທີ່ຮຽນຈົບຊັ້ນມັດທະຍົມ ກ່ຽວກັບທ່າແຮງດ້ານອາຊີບຂອງເຂົາເຈົ້າ.

ນອກຈາກນີ້, ໄດ້ມີການຈັດຕັ້ງກອງປະຊຸມປຶກສາຫາລື ລະຫວ່າງ ສະພາການຄ້າ ແລະ ກະຊວງສຶກສາທິການ ແລະ ກິລາ ຢ່າງເປັນປົກກະຕິ. ໄດ້ມີການສ້າງຄູ່ມືມາດຕະຖານອາຊີບ ເຊິ່ງເປັນຮ່າງຄູ່ມືທຳອິດທີ່ໄດ້ຖືກນຳໃຊ້ ເປັນພື້ນຖານສຳລັບສ້າງຫຼັກສູດ ທີ່ເນັ້ນໃສ່ຄວາມຕ້ອງການ ຂອງຕະຫຼາດແຮງງານໃນອະນາຄົດ.

ສະຖາບັນພັດທະນາອາຊີວະສຶກສາ (ສພອ) ໄດ້ຈັດຕັ້ງປະຕິບັດຫຼັກສູດການຝຶກອົບຮົມກ່ຽວກັບ ອາຊີວະສຶກສາແບບຄວບຄູ່ ສຳລັບຄູອາຈານ ແລະ ຜູ້ບໍລິຫານ ລະດັບກາງຂອງສະຖານອາຊີວະສຶກສາ ລວມທັງຫຼັກສູດການຝຶກອົບຮົມໃນຫົວຂໍ້ ອາຊີວະສຶກສາສີຂຽວ. ນອກຈາກນີ້, ຫ້ອງ ດິຈິຕອລ ແລັບ ໄດ້ຖືກສ້າງຕັ້ງຂຶ້ນ ເພື່ອພັດທະນາສື່ການຮຽນ-ການສອນໃນຮູບແບບດິຈິຕອລ ແລະ ຄູກໍໄດ້ເຂົ້າຮ່ວມຝຶກອົບຮົມ. ໂຄງການຍັງເນັ້ນໜັກໃສ່ ອາຊີວະສຶກສາສີຂຽວ ໂດຍສຸມໃສ່ການຝຶກອົບຮົມຄູ ໃນດ້ານການນຳໃຊ້ພະລັງງານ ແລະ ຊັບພະຍາກອນ ຢ່າງມີປະສິດທິພາບ ເຊິ່ງຫົວຂໍ້ໃໝ່ ເຊັ່ນ ການໂຮງແຮມ ແລະ ການປຸງແຕ່ງອາຫານແບບຍືນຍົງ ກໍໄດ້ຖືກດັດປັບໃຫ້ເຂົ້າກັບສະພາບທ້ອງຖິ່ນ ແລະ ສາມາດເຂົ້າເຖິງໄດ້ໂດຍບໍ່ເສຍຄ່າ ຜ່ານຊ່ອງທາງການຮຽນຮູ້ອອນລາຍ "Atingi".

## ບົດບາດຍິງ-ຊາຍ ແລະ ການພັດທະນາເສດຖະກິດ

ໂຄງການ VELA ໄລຍະ III ມີເປົ້າໝາຍທີ່ຈະນຳອາຊີວະສຶກສາແບບຄວບຄູ່ (ອສຄ) ເຂົ້າໃນລະບົບອາຊີວະສຶກສາຂອງ ສປປ ລາວ, ເຊິ່ງສອດຄ່ອງກັບ ເປົ້າໝາຍທີ 4 (ຊັບພະຍາກອນມະນຸດ) ຂອງຍຸດທະສາດສະຫະພາບເອີຣົບ 2021-2025 (TES). ໂຄງການນີ້ສະໜັບສະໜູນຫົວຂໍ້ຫຼັກຂອງ ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງສະຫະພັນເຢຍລະມັນ (BMZ) ເຊັ່ນ: ການພັດທະນາເສດຖະກິດແບບຍືນຍົງ, ການຝຶກອົບຮົມ ແລະ ການຈ້າງງານ ແລະ ຍັງສອດຄ່ອງກັບຍຸດທະສາດຂອງ BMZ ໃນດ້ານອາຊີວະສຶກສາ, ນະໂຍບາຍການພັດທະນາທີ່ແນໃສ່ແມ່ຍິງ, ຂະແໜງສິ່ງແວດລ້ອມ ແລະ ນະໂຍບາຍການພັດທະນາຂອງເຢຍລະມັນ ແລະ ອາຊີ ໂດຍສະເພາະແມ່ນຄວາມເທົ່າທຽມທາງດ້ານບົດບາດຍິງ-ຊາຍ. ໂຄງການ ຍັງມີເປົ້າໝາຍພັດທະນາວຽກງານ ອສຄ ທີ່ໄດ້ຈັດຕັ້ງປະຕິບັດຢູ່ແລ້ວໃຫ້ດີຍິ່ງຂຶ້ນ ໂດຍການປະສານງານຢ່າງໃກ້ຊິດກັບພາກລັດ ແລະ ຫົວໜ່ວຍທຸລະກິດ ເພື່ອຂະຫຍາຍ ອສຄ ຢູ່ໃນຂົງເຂດພາກເໜືອ, ພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ ທີ່ມີທ່າແຮງທາງດ້ານເສດຖະກິດ ແລະ ມີຄວາມຕ້ອງການແຮງງານສູງ ໃນສາຂາອາຊີບທີ່ກ່ຽວຂ້ອງ.



*ຄູຝຶກຢູ່ສະຖານປະກອບການນຳພານັກສຶກສາຮຽນປະຕິບັດຕົວຈິງ ໃນໂຮງຊ່າງ ສາຂາຊ່າງລົດຍົນ*
*ຮູບພາບໂດຍ: © ທ່ານ ພູນຊັບ ເທບວົງສາ*

### ກ່ຽວກັບ GIZ ລາວ

GIZ, ໃນນາມເປັນສ່ວນຫນຶ່ງຂອງການຮ່ວມມື ເຢຍລະມັນ ເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວ ແຕ່ປີ 1993 ຕາງຫນ້າໃຫ້ກະຊວງການຮ່ວມມື ດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ) ພ້ອມກັບບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາ. ໃນປັດຈຸບັນ, GIZ ກຳລັງສະຫນັບສະຫນູນບັນດາໂຄງການໃນ 4 ຂົງເຂດບູລິມະສິດຄື: ກ) ການພັດທະນາຊົນນະບົດ, ຂ) ການອະນຸລັກຮັກສາທຳມະຊາດ ແລະ ຊັບພະຍາກອນທຳມະຊາດ, ຄ) ການພັດທະນາເສດຖະກິດແບບຍືນຍົງ ແລະ ງ) ວຽກງານການປົກຄອງທີ່ດີ,
ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາເຂົ້າເບິ່ງທີ່ເວັບໄຊ www.giz.de/laos


| | | | |
|---|---|---|---|
| ຈັດພິມໂດຍ | Deutsche Gesellschaft für Internationale Zusammenarbeit (GIZ) GmbH | ຮູບຖ່າຍໂດຍ | GIZ/ທ່ານ ພູນຊັບ ເທບວົງສາ |
| | ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ | ຮຽບຮຽງໂດຍ | ທ່ານນາງ ອານຢາ ເຣເດີ |
| | | ຕິດຕໍ່ | ທ່ານນາງ ອານຢາ ເຣເດີ (anja.reder@giz.de) |
| | ໂຄງການອາຊີວະສຶກສາ ໃນ ສປປ ລາວ ໄລຍະ III (VELA III) | | ຫ້ອງການ GIZ ຈະເປັນຜູ້ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ |
| | ໂຄງການອາຊີວະສຶກສາ ໃນ ສປປ ລາວ ໄລຍະ III (VELA III)<br>373/18 ຖະຫນົນວັດນາກໃຫຍ່, ບ້ານ ທ່າພະລານໄຊ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ, ສປປ ລາວ.<br>ໂທ: +856 21 353605<br>www.giz.de/laos (EN); www.giz.de/laos-la (LA) | ຕາງໜ້າໃຫ້ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາແຫ່ງສະຫະພັນເຢຍລະມັນ (BMZ) |
| ລົງວັນທີ | ເດືອນ ພະຈິກ 2024 | ເວັບໄຊທ໌ທີ່ກ່ຽວຂ້ອງ | https://dct.lncci.la/en/ |
| ອອກແບບໂດຍ | ໜ່ວຍງານຂໍ້ມູນຂ່າວສານ, ຫ້ອງການ GIZ ປະຈຳ ສປປ ລາວ, ນະຄອນຫລວງວຽງຈັນ | | |